22110567

International Baccalaureate®
Baccalauréat International
Bachillerato Internacional

**LAO A1 – STANDARD LEVEL – PAPER 1**
**LAO A1 – NIVEAU MOYEN – ÉPREUVE 1**
**LAOSIANO A1 – NIVEL MEDIO – PRUEBA 1**

Wednesday 11 May 2011 (morning)
Mercredi 11 mai 2011 (matin)
Miércoles 11 de mayo de 2011 (mañana)

1 hour 30 minutes / 1 heure 30 minutes / 1 hora 30 minutos

INSTRUCTIONS TO CANDIDATES

- Do not open this examination paper until instructed to do so.
- Write a commentary on one passage only. It is not compulsory for you to respond directly to the guiding questions provided. However, you may use them if you wish.

INSTRUCTIONS DESTINÉES AUX CANDIDATS

- N'ouvrez pas cette épreuve avant d'y être autorisé(e).
- Rédigez un commentaire sur un seul des passages. Le commentaire ne doit pas nécessairement répondre aux questions d'orientation fournies. Vous pouvez toutefois les utiliser si vous le désirez.

INSTRUCCIONES PARA LOS ALUMNOS

- No abra esta prueba hasta que se lo autoricen.
- Escriba un comentario sobre un solo fragmento. No es obligatorio responder directamente a las preguntas que se ofrecen a modo de guía. Sin embargo, puede usarlas si lo desea.


© International Baccalaureate Organization 2011

https://xtremepape.rs/

*ໃຫ້ເຈົ້າວິຈານ**ໜຶ່ງເລື່ອງ**ທີ່ເຈົ້າເລືອກຈາກສອງເລື່ອງຕໍ່ໄປນີ້*

**1.**

ແຕ່ເປັນຫຍັງທ່າທາງໜໍຄືຄົນມີເງິນແທ້ ເບິ່ງເຄື່ອງແບບປສີງາມ ໂມງກໍສາຍທອງຄຳຝລັ່ງ ທ່າທາງມັນພູມຖານເອົາແທ້ ຕ່າງກັບບຸນກອງຊຶ່ງຮຽນຈົບຮອດດີປໂລມຢ່າງດີ ອອກມາເປັນ ຂ້າລາດຊະການກະຊວງສຶກສາ ຊ່ຳໄດ້ກໍຊ່ຳນັ້ນມາເປັນສິບປີແລ້ວ

“ໄປຈັ່ງໃດມາຈັ່ງໃດສ່ຽວ” ບັກໂຄ້ນຈັບມືສັ່ນແບບຝລັ່ງ ທ່າທາງບອກວ່າເປັນນາຍຜູ້ນຶ່ງລະ “ໄປກິນເຂົ້ານຳເຮົາຈັກຄາບ ເຮົາເຊີນໝໍ່ໄວ້ຫຼາຍຄົນ” ສອງສະຫາຍຍ່າງເລາະເຂົ້າໄປພັດຕະຄານ ຊັ້ນດີ ບຸນກອງຫັນໃຈໃຫຍ່ເຂົ້າໃຫ້ທ່າທາງຜື່ນຜາຍຂຶ້ນເພາະວ່າດົນແສນດົນຈຶ່ງຈະມີໂອກາດຜ່ານກາຍ ມາໃນສະຖານທີ່ເຊັ່ນນີ້ ຊິກິນມື້ຂົ້ວເຝີຂົ້ວແຕ່ລະເທື່ອກໍຍັງຄຶດແລ້ວຄຶດອີກຊາຫຍັງວ່າຈະໄດ້ກິນສັບເປັດ ສັບໄກ່ ເງິນເດືອນໝົດເດືອນໃຫ້ແມ່ອ້ອຍຊື້ເຂົ້າໝຽວໄຖ່ນຶ່ງໄວ້ເຮືອນ ຊື້ປຶ້ມຊື້ສໍໃຫ້ລູກໆໃຫຍ່ຊື້ນົມໃຫ້ຜູ່ ນ້ອຍແລ້ວຈຶ່ງໄວ້ຊື້ຊີ້ນຊື້ປານຳຕລາດກິນປະຈຳວັນຍັງບໍ່ຮອດວັນທີ່ຊາວຈັກເທື່ອ ຄຶດແລ້ວບຸນກອງກໍນັ່ງ ລົງຕັ່ງພາຍໃນຫ້ອງຕິດອາຍເຢັນ ມີສາວຊາວຈີນໜ້າຕາເປັນຕາຮັກນຸ່ງກະໂປງຊັ້ນໆມາຈົດຊື່ຂອງ ກິນຄືດັ່ງທີ່ບຸນກອງເຄີຍອ່ານໃນນິຍາຍຝລັ່ງຫຼືໄທບໍ່ມີຜິດ

…ສຽງບັກໂຄ້ນຮ້ອງສັ່ງຍຳຕີນໄກ່ມາອີກ ລະຄວາມຄຶດຫ່ວງໃຍນຳລູກເມັຍໄວ້ຫັ້ນຊົ່ວຄາວ ກ່ອນເທາະ ຝ້າວເລັ່ມກິນຂົ້ວຊຶ່ງຄ້າງຖ້ວຍຢູ່ໃຫ້ໝົດເພື່ອຈະຄີບຍຳມະຫາແຊບນຳໝູ່ຄັກໆແຕ່ຄັນແລ້ວ ເມື່ອຍຳຕີນໄກ່ເຂົ້າປາກທ້ອງມັນເຕັມຂຶ້ນອີກສມອງອັນຫວ່າງເປົ່າກໍຄຶດຕໍ່ໆໄປ ຮ້ວາຍປານນີ້ແມ່ອ້ອຍຄືຊິ ເມື່ອຖ້າແລະພາລູກກິນເຂົ້າກັບຕຳໝາກຮຸ່ງອີ່ມໄປແລ້ວຕີ້

ໄກ່ຈານສຸດທ້າຍຍັງແດງເຕັມຈານ ປາກົດຄີບຜູ່ຕ່ອນແລ້ວກໍບໍ່ມີໃຜກິນຕໍ່ ຄົງຈະອີ່ມຄັບທ້ອງ ໄປໝົດແລ້ວ ບຸນກອງກໍກິນບໍ່ລົງອີກ ນັ່ງຫຼຽວເບິ່ງຕ່ອນຊີ້ນໄກ່ດ້ວຍຈິດໃຈອິສຍາ ນ້ຳຕາບຸນກອງ ໄຫຼຊຶມເຂົ້າໄປໃນຫົວໃຈ ຖ້າໄດ້ຫົກເຈັດຕ່ອນງາມໆນີ້ໄປໃຫ້ລູກ ບຸນກອງຄຶດ

ໝົດທຸກຄົນລຸກຂຶ້ນຈັບມືສັ່ງລາກັນແບບຝລັ່ງ ບຸນກອງຂອບອົກຂອບໃຈບັກໂຄ້ນຢ່າງໃຫຍ່ ແຕ່ເມື່ອຈະກ້າວອອກຈາກພັດຕະຄານພ້ອມກັບເກີເກົ່ານັ້ນ ບຸນກອງຄຶດຫຍັງໄດ້ພໍດີ ເອົາຍ່າງຄືນໃນ ປະຕູເຮືອນຄົວ ພົບສາວເສີຟອາຫານຜູ້ເກົ່າຕາງຕິຖາມຫາຫ້ອງນ້ຳແລ້ວກໍຕື່ມວ່າ “ໄກ່ຫຼືອກິນວ່າງກີ້ນີ້ຫໍ່ໃຫ້ແດ່” ແລ້ວກໍຍ້ອນເຫັນສີໜ້າບໍ່ພໍໃຈແກມດູຖູກອາດໃດອາດນຶ່ງຂອງສາວນັ້ນ ເລີຍເວົ້າຕໍ່ວ່າ “ຊິເອົາໄປໃຫ້ໝາດອກ” ເອົາເສືອກດັນສະແດງການຊື້ໜ້າເຈົ້າຂອງໄວ້

ສະນັ້ນເມື່ອເຂົ້າມາຮອດເຮືອນຕອນບ່າຍເກືອບສອງໂມງ ໃນດວງຈິດພາກພູມໃຈທີ່ຈະໃຫ້ ລູກກິນໄກ່ຈາກພັດຕະຄານຊັ້ນສູງໃນວຽງຈັນ ແມ່ອ້ອຍຊຶ່ງນຳເອົາຫໍ່ໄກ່ໄປໄຂໃນເຮືອນຄົວໃຫ້ລູກ ແລ່ນຕາຕີ່ອອກມາຮ້ອງໃສ່ວ່າ “ພໍ່ອ້ອຍເຈົ້າໄປເລັ່ນເອົາກະດູກເຂົ້າໝູມາແຕ່ທາງໃດຊິໃຫ້ລູກກິນ?”

ກັນເວນ ເອົາຫຼຽວເບິ່ງຕ່ອນດູກໄກ່ປົນດູກໝູໝຸ່ນໆ ຊຶ່ງຄົນເລັ່ນມແຫ້ນຫຼ້ອນແລ້ວນັ້ນຢ່າງ ແສບໝາກຫົວໃຈ ຜີສາງຕົນໃດນໍທີ່ດົນໃຈໃຫ້ເອົາເສືອກເວົ້າອອກໄປໄດ້ວາ “ເອົາໃຫ້ໝາກິນ”

ດວງຈຳປາ ເສືອກ ໃນ *ໂຮມເຣື່ອງສັ້ນຊຸດກຸ່ຍກິນສາວຄາວຜູ່ສາວ* ວຽງຈັນ: ປາກປາສັກ (1971)



https://xtremepape.rs/

- ໃຫ້ເຈົ້າວິຈານວ່າຜູ້ຂຽນສະທ້ອນສິ່ງທີ່ເພິ່ນຕ້ອງການສື່ຕໍ່ຜູ້ອ່ານແນວໃດ

- ໃຫ້ເຈົ້າວິຈານສາເຫດທີ່ຜູ່ຂຽນໃຊ້ເລື່ອງຕລົກເພື່ອຈະຂຽນກ່ຽວກັບເລື່ອງທີ່ໂສກເສົ້າ

- ໃຫ້ເຈົ້າວິຈານວິທີການແບບສິນລະປະຂອງຜູ້ຂຽນເພື່ອຈະສາທ້ອນໃຫ້ຜູ້ອ່ານເຫັນເຖິງນິດໄສຂອງບຸນກອງ



https://xtremepape.rs/

**2.**

ຫອມດອກໄມ້ ຄະນຶງໂອ້ພາຍຫລັງ ຄຶດຄັ່ງແຄ້ນ ຫິວຫອດໃນມະໂນ
ພ່າງຕາຍທຸກ ຄອບການຫລວງຂ້ອງ ໄປມາແທ້ ບໍ່ມີຄວາມຊຶມຊື່ນ
ເພາະບໍ່ມີຜົນປະໂຫຍດໄດ້ ນຳໃຊ້ແຕ່ການ
ອັນນີ້ ເປັນກອນເລື່ອງ ຜູ້ຂຽນເດີນເຫດ ສຳລວດບ້ານຂ້າ ທຳບັນຊີພ້ອມເລັ່ງເງິນ
ຟັງຍິນ ກາເວົ້າຮ້ອງ ຖົວລາງໄຂຂ່າວ ຈັກຈັ່ນຮ້ອງສອງຂ້າງແຄ່ທາງ
ນັບແຕ່ຫລາຍວັນໄດ້ ຫລາຍຄືນເດີນດຸ່ງ ກໍຈິ່ງມົ້ມດ່ານດ້າວ ດົງກວ້າງຮອດເມືອງ
ກໍບໍ່ ມີເຄືອງແຄ້ນດ້ວຍ ທາຍໂພຍເຈັບປ່ວຍ ຝູງພີ່ນ້ອງ ສະບາຍແທ້ທຸກຄືນ
ເພາະເພື່ອ ປາລະມີເຈົ້າ ພະຄຸນທຳກັ້ງເຫລື່ອມ ສັບພະໂພຍພະຍາດໄຂ້ ບໍ່ມີໄດ້ບຽດກາຍ
ເຈົ້າເຮີຍ
ຈິ່ງໄດ້ພາກຈາກຫ້ອງ ເດີນດັ້ນຂຶ້ນດົງ ຄອມວ່າແລ້ວ ເລີຍຄຳອໍ່ລະຊອນ
ພາແລງເຂົ້າ ຍົກມາຍໍໃຫ້ ມີທັງຜາລາ ໝາກໄຟຫວານມວນມອບ
ກິນເຂົ້າແລ້ວ ເລີຍລ້ຳລ່ວງນອນ ລາຕີນັ້ນ ຫລັບໄປໜ້ອຍນຶ່ງ
ຝັນວ່າ ພະມິ່ງຕົ້ນ ປະສົງປ້ອງນຸ່ງຖື ໄສຍາຄຳ້ ກະຊັ່ງຝັນສະດຸ້ງຕື່ນ
ຄຶດຮຸ່ງນ້ອງ ແພງແກ້ວມິ່ງຂວັນ ຢ້ານແຕ່ມີໄພຕ້ອງ ໂພຍເຂັນປັງເກີດ
ກໍຈິ່ງວອນເຖິງເທບພະໄທ້ ພະອິນເຈົ້າຍອດສະຫວັນ ກັບທັງບຸນຄູນແກ້ວ ສາມປະການຈິ່ງມຸງເຫລື່ອມ
ພະມິ່ງຂ້າ ທັງລູກໃຫ້ຢູ່ດີ ບ້າງແດ່ ເທື່ອນີ້ ຂ້າໄດ້ພັດພາກບ້ານ ເຫີງຫ່າງເພາະການຫລວງ
ຫ່ຽວໄປດົງ ເລັ່ງເງິນເລິງເລື້ອຍ ຂໍໃຫ້ພົ້ນຕາເຈົ້າ ຄວງສະຫວັນຈິ່ງຫລິງລຳ່
ຊູຊອຍນ້າວ ແນວເຊື້ອໃຫ້ຢູ່ດີ ແດ່ທ້ອນ ຄ້ອມວ່າອະທິຖານແລ້ວ ລາໄປພະລັນຮີບ
ອອກຈາກບ້ານ ນາເມັກແລ້ວດຸ່ງເດີນ ຂຶ້ນໂຄກກວ້າງ ເຂົ້າປ່າໄພສົນ
ເຮົາໄດ້ເອົາຕົນຜ້າຍ ຄີລີຮາວເຖື່ອນ ລິງວອກເຕັ້ນ ປາຍໄມ້ຄື່ນເຄັງ
ດົງຂວາງໂອ້ ໄພສົນແສນສຳ່ ເຫັນຮອກເໝັ້ນ ກະເລັນຈ້ອນຄ່າງຊະນີ
ມີທັງນົກຈີ້ຈູ ຖົວແທດລາງເຂັດ ພຶງຄະນາສັດ ໝູ່ກວາງຟານຊ້າງ
ມີທັງໄຟຫວານສົ້ມ ເຕັມດົງເຮືອງເຮື່ອ ດົງໃຫຍ່ກວ້າງ ຮຽມຜ້າຍລວດກາຍ
ຟ້າສະນັ່ນກ້ອງ ດັງຫ້າວທົ່ວບົນ ຝົນກໍຕົກລົງ ຖືກປັດຖະພີຮຳແຜ່ນດິນແລ້ວ
ຝູງໝູ່ສັດສິ່ງເນື້ອ ເສືອຫ້າວຄູດທາງ ຮຽມບໍ່ກົວເກງຢ້ານ ຊິເດີນໄປແຖວເຖື່ອນ
ເອົາແຕ່ຄຸນຍອດແກ້ວ ທຳເຈົ້າຊິເຫລື່ອມງຳ ຊາດທີ່ເປັນຄົນໃຊ້ ທຳການຖອຍເລີກມີໄດ້
ການບໍ່ແລ້ວ ເມື່ອໜ້າຕ່າວຄືນ ດັ່ງນັ້ນ ເອົາຈັກຫົວຂວັນເທົ້າ ທັງແດນອາຍອາດ
ການທ່ານໃຊ້ ບໍ່ທັນໄດ້ຕ່າວມາ ເປັນຄົນໄປ້ ພາລາຊາດຊົ່ວ
ຍິງຈັກຊີ້ ແໜ່ໜ້າຫູຮູ້ມີນັນ ຄຳນີ້ ກົວຈັກມີມາໃກ້ ຕົວເຮົາຜູ້ເດີນດຸ່ງ
ກໍຈິ່ງອົດຕໍ່ສູ້ ການນັ້ນຕໍ່ມາ

ບາພອຍ *ຕຳນານລຳທອງຫຼວງ* ຍັງບໍ່ເຄີຍພິມ (1910)



https://xtremepape.rs/

- ໃຫ້ເຈົ້າວິຈານວິທີການຂອງຜູ້ຂຽນໃນການແຕ່ງວັນນະຄະດີ

- ໃຫ້ເຈົ້າວິຈານການໄຊ້ທັມມະຊາດເພື່ອຈະສ້າງບັນຍາກາດ

- ຜູ້ຂຽນສະທ້ອນໃຫ້ເຫັນອາລົມຂອງ ໂຕເອງແນວໃດ



https://xtremepape.rs/